**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 31 ມົກຣາ 2009 (1-31-2010)**

---

## <u>ປຸກປ້ຳກັບວຽກງານ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ປັນຍາຈານ 2:18-26; 5:18-20)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ແມ່ນກ່ຽວກັບຜົນປໂຍດທີ່ອາຈເກີດຂຶ້ນ ແລະພຣະພອນຕ່າງໆຈາກ ການທຳງານ ເມື່ອພຣະເຈົ້າຊົງນຳພາ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ມີຫລາຍຄົນໄດ້ອຸທິດຊີວິດໃສ່ວຽກງານ ແລະຖືວຽກງານກົບກົນ ຊຶ່ງມັນເປັນ ເຄື່ອງທຳລາຍສາຍສັມພັນ ແລະເປັນການລົດຄຸນຄ່າຊີວິດຝ່າຍຈິດວິນຍານຂອງພວກເຂົາເຈົ້າ. ຫລາຍຄົນກໍພົບວ່າ ວຽກງານຂອງເຂົາເຈົ້າ ໜ້າເບື່ອ ແລະບໍ່ມີຄວາມໝາຍ. ຜູ້ທີ່ສຶກສາບົດຮຽນນີ້ກໍຈະສາມາດຮຽນຮູ້ ແລະພົບຄວາມໝາຍ ຈາກການທຳງານ ແລະສເລີມສລອງຜົນຈາກວຽກງານຂອງພວກເຂົາເຈົ້າວ່າ ເປັນຂອງຂວັນຈາກພຣະເຈົ້າ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ບົດຮຽນນີ້ສາມາດປ່ຽນແປງທິດທາງຂອງທ່ານໃນການເບິ່ງວັດຖຸສິ່ງຂອງທີ່ທ່ານເປັນເຈົ້າຂອງໂດຍການຊ່ອຍເຫລືອ ທ່ານໃຫ້ລຽງລຳດັບບ່ອນທີ່ທ່ານສຸມກຳລັງ, ສິ່ງທີ່ທ່ານຄິດວ່າສຳຄັນ, ແລະສິ່ງທີ່ມີຄ່າຢ່າງແທ້ຈິງ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**
1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລຶ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>** ບົດຮຽນທີ່ຈະສຶກສາໃນວັນນີ້ ຢູ່ໃນພຣະທັມປັນຍາຈານໃນເຣື່ອງການຕໍ່ສູ້ກັບວຽກງານຕ່າງໆ
- ງານທຳອິດຂອງທ່ານແມ່ນຫຍັງ?
- ແມ່ນຫຍັງທີ່ທ່ານມັກການທຳງານ?
- ໃຫ້ນັກຮຽນແບ່ງປັນເຣື່ອງອາຊີບ ແລະງານທີ່ເຂົາເຈົ້າທຳ. ໃຫ້ອອກຄວາມຄິດຄວາມເຫັນເຖິງເຫດຜົນຕ່າງໆ ຂອງຄົນທຳງານ ແລະປະຕິບັດຕາມວຽກງານທີ່ມີຄຸນນະສົມບັດ ແລະເອົາເປັນອາຊີບ.
- ທ່ານໄດ້ເລືອກເອົາອັນໃດເປັນອາຊີບຂອງທ່ານ ແລະ ທ່ານໃຊ້ເວລາໃນການທຳງານອັນໃດສ່ວນຫລາຍໃນ ຊີວິດຂອງທ່ານ? ຖ້າຫາກບໍ່ແມ່ນເຣື່ອງເງິນ, ແລ້ວແມ່ນຫຍັງທີ່ທ່ານເລືອກເອົາເປັນການງານຂອງທ່ານ?
- ພຣະເຈົ້າມີພຣະປະສົງຢາກໃຫ້ພວກເຮົາຮັບເອົາການງານຊຶ່ງເປັນຂອງຂວັນຈາກພຣະອົງ. ພຣະອົງຕ້ອງ

ການໄພ່ພົນຂອງພຣະອົງຮັບຜົນຢ່າງມາກມາຍຈາກການງານຂອງເຂົາ ແລະສເລີມສລອງຕອບສນອງຕໍ່ການທໍາງານທີ່ໄດ້ສໍາເຣັດຜົນເປັນຢ່າງດີ.

1. **<u>ການງານຂອງຂ້າພະເຈົ້າ-ມໍຣະດົກຂອງຂ້າພະເຈົ້າ:</u>** (ປັນຍາຈານ 2:18-23)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 2:18-23
- ເປັນຫຍັງກະສັດໄຊໂລໂມນຈຶ່ງບອກເຖິງ ການເບື່ອໜ່າຍການງານທຸກຢ່າງທີ່ລາວທໍາ ແລະດຽວນີ້ລາວໄດ້ເອົາຕົວລາວເຫີນຫ່າງຈາກການງານຂອງລາວ. ກະສັດໄຊໂລໂມນເຂົ້າໃຈທຸກຢ່າງທີ່ລາວໄດ້ທໍາ ແລະສິ່ງຕ່າງໆທີ່ລາວໄດ້ມາກໍຕ້ອງປະໄວ້ໃຫ້ຄົນອື່ນ. (ເອົາຫຍັງໄປນໍາບໍ່ໄດ້ຈັກຢ່າງ)
- ເປັນເພາະເຫດໃດຄົນຈຶ່ງທໍາງານຢ່າງໜັກໜ່ວງແທ້?
- ສິ່ງທີ່ເກີດຂຶ້ນໃນເວລາລາວຕາຍໄປທຸກສິ່ງທີ່ລາວຫາມາໄດ້ບໍ່ແມ່ນຂອງລາວຈັກແນວເລີຍ.

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປັນຍາຈານ 2:18-23)

1. ມື້ໃດມື້ນຶ່ງຊີວິດຂອງພວກເຮົາກໍຈະຈາກໄປ ພ້ອມກັບໝາກຜົນຂອງການງານທຸກຢ່າງກໍຈະເປັນຂອງຄົນອື່ນ ເວລາຂອງພວກເຮົາແມ່ນອັນໃດທີ່ມັນຄຸ້ມຄ່າເວລາຂອງພວກເຮົາ?
2. ແມ່ນຫຍັງແດ່ທີ່ທ່ານປະໄວ້ໃຫ້ຄົນທີ່ມາພາຍຫລັງທ່ານ ຫລັງຈາກທ່ານຈາກໄປ?
3. ແມ່ນຫຍັງທີ່ເປັນເຫດໃຫ້ພວກເຮົາຜ່າຍແພ້ການທໍາງານຂອງພວກເຮົາ?
4. ແມ່ນຫຍັງທີ່ມະນຸດໄດ້ຈາກການງານ ແລະທຸກສິ່ງທເຂົາໄດ້ກາກກໍາທໍາງານໜັກຂອງເຂົາພາຍໃຕ້ດວງອາທິດ?

2. **<u>ງານຂອງຂ້າພະເຈົ້າ - ຄວາມຊື່ນຊົມຂອງຂ້າພະເຈົ້າ:</u>** (ປັນຍາຈານ 2:24-26)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 2:24-26 ໃຫ້ນັກຮຽນປຽບທຽບເພື່ອໃຫ້ເຫັນຄວາມແຕກຕ່າງຂອງຄວາມຊົມຊື່ນໃນການງານ ທຽບກັບການທໍາງານເພື່ອພຣະເຈົ້າທີ່ໄດ້ມານັ້ນວັນນຶ່ງກໍຈະກາຍເປັນຂອງຄົນອື່ນ ຫລືສູນເສັຽໄປ.
- ແມ່ນທາງໃດທີ່ມະນຸດໄດ້ຮັບການອວຍພອນຈາກພຣະເຈົ້າໂດຍຜ່ານທາງການງານ?
- ຄົນຜູ້ນຶ່ງໄດ້ພົບກັບຄວາມຊົມຊື່ນກັບການທໍາງານຂອງເຂົາເຈົ້າແນວໃດ? ແລະໃນສມັຍຂອງເຂົາເຈົ້າຖ້າບໍ່ດໍາເນີນສືບຕໍ່ທໍາງານແລ້ວຈະເປັນຢ່າງໃດ?
- ພຣະເຈົ້າໄດ້ຊົງປະທານສະຕິປັນຍາ, ຄວາມຮູ້ ແລະຄວາມຊົມຊື່ນຍິນດີໃຫ້ແຕ່ລະຄົນ. ໃຫ້ຄິດເບິ່ງວ່າເຂົາເຈົ້າມີສະຕິປັນຍາ, ຄວາມຮູ້, ແລະຄວາມຊົມຊື່ນຜ່ານທາງການມີສາຍສັມພັນກັບພຣະເຈົ້າ ແລະການຮັບໃຊ້ພຣະອົງໃນການທໍາງານຂອງເຂົາເຈົ້າຢ່າງໃດ?
- ຂໍໃຫ້ອ່ານພຣະທັມ ໂກໂລຊາຍ 3:23-24. ແລ້ວປະເມີນເບິ່ງທາງທີ່ຜູ້ອາວຸໂສໄດ້ໜູນຈິດໜູນໃຈ ແລະໃຫ້ຄໍາປຶກສາຊຶ່ງກັນ ແລະກັນໃຫ້ຊອກສແວງຫາຄວາມຊົມຊື່ນຍິນດີໃນສິ່ງທີ່ເຂົາເຈົ້າຊື້ມາ ຫລືໄດ້ມອບງານໃຫ້ທໍາ ບາງສິ່ງບາງຢ່າງກໍທໍາເພື່ອພຣະເຈົ້າຢູ່ສເມີ.

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປັນຍາຈານ 2:24-26)

1. ທ່ານໄດ້ເຫັນນິສັຍ ແລະທັສນະຂອງກະສັດໂາໂລໂມນປ່ຽນຢູ່ໃນພຣະຄໍາເຫລົ່ານີ້ແນວໃດ?
2. ກະສັດໄຊໂລໂມນຈື່ຈໍາຈາກພຣະທັດຂອງພຣະເຈົ້າ (ກິຈການ ແລະຄວາມຕັ້ງພຣະທັຍໄວ້ໃຫ້ໄດ້ມີຄວາມ

ຊົມຊື່ນຍິນດີກັບສິ່ງທີ່ທຳນັ້ນ) ນັ້ນມີຄວາມໝາຍແນວໃດສຳລັບພວກເຮົາ?

3. ຈະເກີດຂຶ້ນກັບຄົນບາບ ໃນຂໍ້ທີ 26 ນັ້ນກະສັດໄຊໂລໂມນໄດ້ໝາຍຄວາມວ່າແນວໃດ?
4. ທ່ານໄດ້ຄວາມຊົມຊື່ນຍິນດີຫຍັງແດ່ຈາກການງານຂອງທ່ານ ຢ່າງໃດກໍດີນັ້ນເປັນໜ້າທີ່ການທຳງານ ສ່ວນຫລາຍແມ່ນຈາກບ້ານເຮືອນ ຫລືການລ້າງຖ້ວຍຊາມ, ການປັດກວາດ, ຫລືການທີ່ຫລານໆມາຫາ?

3 . <u>ວຽກຂອງຂ້າພະເຈົ້າ- ຂອງຂວັນຈາກພຣະເຈົ້າ:</u> (ປັນຍາຈານ 5:18-20)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 5:18-20
- ພຣະທັມຕອນນີ້ໄດ້ສນັບສນູນພຣະທັມປັນຍາຈານ 2:24-26 ແລະຍັງໄດ້ເນັ້ນໜັກບາງຢ່າງທີ່ແຕກຕ່າງກັນຢ່າງໃດ?
- ກະສັດໄຊໂລໂມນຈຳໄດ້ວ່າຂອງຂວັນຈາກພຣະເຈົ້ານັ້ນເກີດຂຶ້ນມາຈາກວຽກງານຢ່າງບໍ່ຄາດຝັນເລີຍ. ພວກເຮົາສາມາດຊອກຫາຄວາມຍິນດີໃນສິ່ງທີ່ໄດ້ມາ ແລະການສຳເຣັດໃນໜ້າທີ່ການງານ.
- ຕາບໃດທີ່ຄົນຍັງມີລົມຫາຍໃຈຢູ່, ເຂົາເຈົ້າກໍສາມາດໃຫ້ຊີວິດມີຄວາມຊົມຊື່ນຍິນດີທີ່ພຣະເຈົ້າຊົງປະທານໃຫ້ໄດ້. ພຣະເຈົ້າມີພຣະປະສົງໃຫ້ພວກເຮົາຊົມຊື່ນຍິນດີ, ປະຕິບັດ, ແລະດີໃຈໃນທຸກວຽກງານທີ່ພຣະອົງຊົງຈັດຕຽມ ແລະມອບໃຫ້ພວກເຮົາມີໂອກາດໄດ້ທຳ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> ປັນຍາຈານ 5:18-20

1. ແມ່ນຫຍັງແດ່ທີ່ກະສັດໄຊໂລໂມນໄດ້ຮຽນຮູ້ຈາກປະສົບການຂອງການເດີນ ແລະການທຳງານເພື່ອພຣະເຈົ້າ ແລະການເດີນ ແລະການທຳງານທີ່ປາສຈາກພຣະເຈົ້າ?
2. ເປັນຫຍັງພວກເຮົາຈຶ່ງຍິນດີກັບວຽກງານຂອງພວກເຮົາ?
3. ພຣະເຈົ້າມີພຣະປະສົງໃຫ້ພວກເຮົາຢູ່ດ້ວຍຄວາມຊົມຊື່ນຍິນດີແຕ່ລະມື້ລະວັນກັບສິ່ງທີ່ພວກເຮົາຫາມາໄດ້ຈາກການທຳງານຂອງພວກເຮົາແນວໃດ?

<u>ພຣະຄັມພີແຫ່ງຄວາມຈິງ</u>

- ວຽກ ມໍຣະດົກທີ່ໄດ້ຮັບມາຈາກການທຳງານຕລອດຊີວິດນັ້ນກໍສຳຄັນມີຄວາມໝາຍ ສິ່ງນຶ່ງທີ່ດີທີ່ສຸດຄືການສະແດງການໃຫ້ກຽດພຣະເຈົ້າ ໃຫ້ຄົນໃນຍຸກຕໍ່ໄປສາມາດໄດ້ທຳງານຮັບໃຊ້ອົງພຣະຜູ້ເປັນເຈົ້າສືບຕໍ່ໄປ.
- ໂດຍການທວນຄືນເບິ່ງຊີວິດຂອງພວກເຮົາວ່າກຽກງານຕ່າງໆ ເປັນຂອງຂວັນຈາກພຣະເຈົ້າ, ພວກເຮົາມາເປັນຜູ້ດູແລໃນເວລາຂອງພວກເຮົາ ແລະພອນສວັນ.ການຕອບສນອງໃນຄວາມຊົມຊື່ນຍິນດີໃນສິ່ງທີ່ພວກເຮົາທຳເພື່ອອົງພຣະຜູ້ເປັນເຈົ້າ.
- ຄວາມໝາຍສຳຄັນຂອງວຽກງານ ແລະຄວາມສາມາດ ຄືໃຫ້ດີໃຈກັບຂອງຂວັນຈາກອົງພຣະຜູ້ເປັນເຈົ້າທີ່ໄດ້ເສີມສ້າງຊີວິດຂອງພວກເຮົາໃນເວລາອັນສັ້ນໆຢູ່ເທິງແຜ່ນດິນໂລກນີ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH